**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈອມເພັດ
ຫ້ອງການກະສິກຳ ແລະ ປ່າໄມ້
ໂຄງການ ຊກຂ

ເລກທີ:..189.../ຫກປມ
ວັນທີ: 6 / 3 / 2023

# ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດກະສິກຳ, ບໍລິສັດສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກຳໃນຂອບເຂດເມືອງຈອມເພັດ

**ເລື່ອງ:** ການສະໝັກຍື່ນຄຳຮ້ອງເພື່ອຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳເມືອງຈອມເພັດ

- ອີງໃສ່: ສັນຍາເງິນກູ້ຢືມຈາກກອງທຶນ ສາກົນ ເພື່ອການພັດທະນາກະສິກຳ IFAD ເລກທີ: 2000003089.
- ອີງໃສ່: ເລກທີ 034 ກະຊວງການເງິນວ່າດ້ວຍການຈັດຊື້-ຈັດຈ້າງ ໃຫ້ຖືກຕ້ອງຕາມລະບຽບຫຼັກການ.
- ອີງໃສ່: ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ປະຈຳປີ 2023.

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳເມືອງຈອມເພັດ ເປັນໂຄງການສົ່ງເສີມການຜະລິດກະສິກຳຂອງຄົວເຮືອນຂະໜາດນ້ອຍເພື່ອເປັນສິນຄ້າໂດຍມີການເຊື່ອມໂຍງກັບຕະຫຼາດ. ໂຄງການດັ່ງກ່າວມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ໂດຍເລີ່ມຈາກການຜະລິດເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໄປສູ່ການຜະລິດເປັນສິນຄ້າ. ກອງທຶນສົມທົບ ສຳລັບພັດທະນາທຸລະກິດກະສິກຳແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າຂອງກິດຈະກຳທີ່ໂຄງການສະໜັບສະໜູນໄດ້ເຂົ້າເຖິງຕະຫຼາດໂດຍຜ່ານການຊ່ວຍເຫຼືອດ້ານວິຊາການ ແລະການເງິນໃຫ້ແກ່ຫົວໜ່ວຍທຸລະກິດກະສິກຳທີ່ຕິດພັນກັບກຸ່ມກະສິກອນ ແລະ ຊຸມຊົນເປົ້າໝາຍຂອງໂຄງການ ເພື່ອຮັບປະກັນການເຂົ້າເຖິງຕະຫຼາດ, ການມີຕະຫຼາດຮອງຮັບທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງບໍລິການຂອງພາກທຸລະກິດ.

ເພື່ອເປັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຈອມເພັດ ໃນນາມເປັນຈຸດໃຈກາງໃນການປະສານງານຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ຂໍຖືເປັນກຽດແຈ້ງມາຍັງບັນດາຫົວໜ່ວຍທຸລະກິດກະສິກຳທີ່ມີການສົ່ງເສີມການຜະລິດເປັນສິນຄ້າຊາບວ່າ ປັດຈຸບັນທາງໂຄງການໄດ້ມີການສະໜອງທຶນສົມທົບເພື່ອພັດທະນາທຸລະກິດກະສິກຳ.

- **ສຳລັບຂັ້ນເມືອງປ່ອຍທຶນສົມທົບຫົວໜ່ວຍທຸລະກິດກະສິກຳຂະໜາດກາງເມືອງລະ 02-03 ຫົວໜ່ວຍຕໍ່ເມືອງ.**

**ເງື່ອນໄຂຫົວໜ່ວຍທຸລະກິດກະສິກຳມີດັ່ງນີ້:**

- ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD .
- ຫົວໜ່ວຍທຸລະກິດມີການຈົດທະບຽນທີ່ຖືກຕ້ອງຕາມກົດໝາຍ.
- ຫົວໜ່ວຍທຸລະກິດມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
- ຫົວໜ່ວຍທຸລະກິດມີການດຳເນີນກິດຈະການຫຼາຍກວ່າ 02 ປີຂຶ້ນໄປ.
- ຫົວໜ່ວຍທຸລະກິດມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກຳ ແລະ ການເຊື່ອມໂຍງກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ຜົນຜະລິດກັບກຸ່ມຜະລິດທີ່ໂຄງການໄດ້ໃຫ້ການສະໜັບສະໜູນສ້າງຕັ້ງຂຶ້ນ).

ໄລຍະເວລາການປະກາດ 14 ວັນ, ເລີ່ມແຕ່ວັນທີ 6 ຫາ 20/3/2023

ສະນັ້ນ, ຫ້ອງການກະສິກຳ ແລະ ປ່າໄມ້ ຈຶ່ງອອກແຈ້ງການສະບັບນີ້ເຖິງບັນດາຫົວໜ່ວຍທຸລະກິດກະສິກຳ, ບໍລິສັດສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກຳ ຜູ້ທີ່ມີຄວາມສົນໃຈເພື່ອສະໝັກຂໍທຶນສົມທົບນຳໂຄງຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດ ກ່ຽວກັບ ຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍເມືອງຈອມເພັດໃນວັນ ແລະ ເວລາລັດຖະການ.

.

**ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້**
**(ຜູ້ປະສານງານໂຄງການຂັ້ນເມືອງ)**

ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຈອມເພັດ

ວຽງສະຫວັນ ຈັນທະລັງສີ
Viengsavanh CHANTHALANGSY

ຜູ້ປະສານງານໂຄງການຂັ້ນເມືອງ
ເບີໂທຕິດຕໍ່: 020 5999 9178